VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
****

ເລກທີ: 009 /ວຈຊຕ
ນະຄອນຫຼວງວຽງຈັນ, ວັນທີ: 23/04/2021

ຮຽນ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

ເລື່ອງ: ແຈ້ງການກ່ຽວກັບການປິດບໍລິການຊື່ອຄາວໃນບາງຮ້ານທີ່ຂຶ້ນກັບບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

- ອີງຕາມຄຳສັ່ງວ່າດ້ວຍການເພີ່ມທະວີມາດຕາການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໂຄວິດ 19 (COVID-19) ສະບັບເລກທີ 15/ນຍ, ລົງວັນທີ 21/04/2021.

ເນື່ອງຈາກໃນປະຈຸບັນນີ້ ສະພາບການແຜ່ລະບາດຂອງພະຍາດໂຄວິດ 19 (COVID-19) ຍັງສືບຕໍ່ເພີ່ມຂຶ້ນຢ່າງຕໍ່ເໜື່ອງ. ສຳລັບຢູ່ປະເທດລາວ ເຖິງວ່າລັດຖະບານໄດ້ມີມາດຕະການສະກັດກັ້ນ ແລະ ຄວບຄຸມການລະບາດພະຍາດນີ້ຢ່າງຈິງຈັງໃນໄລຍະຜ່ານມາ, ເພື່ອປະຕິບັດຕາມຄຳສັ່ງ ນຍ ສະບັບເລກທີ 15/ນຍ, ລົງວັນທີ 21/04/2021. ສະນັ້ນ

ຜູ້ອຳນວຍການໃຫຍ່ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນໄດ້ຕົກລົງ:

1. ເຫັນດີໃຫ້ເຂດສູນການຄ້າຢຸດໃຫ້ບໍລິການຊື່ອຄາວຈາກ ວັນທີ 23 ເມສາ 2021 ຮອດ ວັນທີ 05 ພຶດສະພາ 2021, ນອກຈາກຮ້ານທີ່ຕິດກັບຖະໜົນບາງແຫ່ງ, ເຊັ່ນ: ຮ້ານກາເຟ, ຮ້ານຊາໄຂ່ມຸກ ແລະ ຊຸບເປີມາເກັດ ພາຍໃຕ້ເງື່ອນໄຂຮັບປະກັນຄວາມປອດໄພໃນການດຳເນີນທຸລະກິດ.

2. ສຳລັບເຂດຕຶກຫ້ອງການ, ແມ່ນເປີດບໍລິການປົກກະຕິໃຫ້ບັນດາບໍລິສັດທີ່ໄດ້ຕັ້ງສຳນັກງານຢູ່ໃນອາຄານຫ້ອງການ, ເພື່ອສະກັດກັ້ນການລະບາດ ໄດ້ຈັດຫ້ອງສະເພາະເພື່ອຕອນຮັບແຂກ ແລະ ບໍ່ອະນຸມັດແຂກພາຍນອກຂຶ້ນໄປຫ້ອງການໃນແຕ່ລະຊັ້ນ, ມີການກວດເທັກອຸນຫະພູມຮ່າງກາຍຂອງພະນັກງານ ໃສ່ຜ້າອັດປາກ, ສະໜອງເຈ່ວນ້ຳ ຢ້າຂ້າເຊື້ອໃຫ້ໃຊ້ຟຣີ, ເພີ່ມທະວີການສີດພົ່ນນ້ຳຢ້າຂ້າເຊື້ອໃນໂຮມສາທາລະນະ. ພ້ອມດຽວກັນນັ້ນ ຍັງມີການປັບປຸງເຕີ່ມອີກໂດຍປະຕິບັດຕາມມາດຕະການສະກັດກັ້ນ, ຄວບຄຸມການລະບາດເພື່ອຕ້ານພະຍາດໂຄວິດ 19 (Covid19).

3. ຖ້າມີການປ່ຽນແປງໃດໆ ທາງວຽງຈັນເຊັ້ນເຕີຈະແຈ້ງໃຫ້ຊາບຕື່ມອີກ.

VIENTIANE CENTER
ວຽງຈັນເຊັ້ນເຕີ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company